ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----====000====-----

ຄະນະກຳມະການຄຸ້ມຄອງຫຼັກຊັບ ເລກທີ 009 /ຄລຕ

ແລະ ຕະຫຼາດຫຼັກຊັບ ນະຄອນຫຼວງວຽງຈັນ, ວັນທີ 21 ກໍລະກົດ 2010

# ຂໍ້ຕົກລົງວ່າດ້ວຍລະບຽບກ່ຽວກັບ ການສ້າງຕັ້ງ ແລະ ການເຄື່ອນໄຫວຂອງບໍລິສັດຫຼັກຊັບ

- ອີງຕາມດຳລັດວ່າດ້ວຍຫຼັກຊັບ ແລະ ຕະຫຼາດຫຼັກຊັບ ສະບັບເລກທີ 255/ນຍ ລົງວັນທີ 24 ພຶດສະພາ 2010;
- ອີງຕາມຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ສະບັບເລກທີ 051/ນຍ ລົງວັນທີ 25 ພຶດສະພາ 2009.

**ຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ຕົກລົງອອກລະບຽບ:**

## ໝວດທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1. ຈຸດປະສົງ

ລະບຽບການສະບັບນີ້ ຜັນຂະຫຍາຍພາກທີ IV ຂອງດຳລັດວ່າດ້ວຍຫຼັກຊັບ ແລະ ຕະຫຼາດຫຼັກຊັບ ເລກທີ 255/ນຍ ລົງວັນທີ 24 ພຶດສະພາ 2010 ຊຶ່ງກຳນົດຫຼັກການ ແລະ ມາດຕະການເພີ່ມເຕີມກ່ຽວກັບການສ້າງຕັ້ງ ແລະ ການຄຸ້ມຄອງການເຄື່ອນໄຫວຂອງບໍລິສັດຫຼັກຊັບ ເພື່ອສົ່ງເສີມໃຫ້ບໍລິສັດຫຼັກຊັບເຄື່ອນໄຫວຢ່າງມີປະສິດທິພາບ, ໝັ້ນຄົງ, ໂປ່ງໃສ ແລະ ຍຸຕິທຳ.

### ມາດຕາ 2. ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ມີຜົນບັງຄັບໃຊ້ຕໍ່ບໍລິສັດຫຼັກຊັບ ລວມທັງພະນັກງານຂອງບໍລິສັດຫຼັກຊັບ ທີ່ເຄື່ອນໄຫວທຸລະກິດຫຼັກຊັບຢູ່ ສປປ ລາວ.

## ໝວດທີ II
## ການສ້າງຕັ້ງບໍລິສັດຫຼັກຊັບ

### ມາດຕາ 3. ການຂໍສ້າງຕັ້ງບໍລິສັດຫຼັກຊັບ

ບຸກຄົນ ແລະ ນິຕິບຸກຄົນທີ່ມີຈຸດປະສົງຂໍສ້າງຕັ້ງບໍລິສັດຫຼັກຊັບ ຕ້ອງມີເງື່ອນໄຂຄົບຖ້ວນ ແລະ ປະກອບສຳນວນຄຳຮ້ອງຂໍສ້າງຕັ້ງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 27 ແລະ 28 ຂອງດຳລັດວ່າດ້ວຍຫຼັກຊັບ ແລະ ຕະຫຼາດຫຼັກຊັບ.

### ມາດຕາ 4. ທຶນຈົດທະບຽນ

ບຸກຄົນ ແລະ ນິຕິບຸກຄົນທີ່ມີຈຸດປະສົງຂໍສ້າງຕັ້ງບໍລິສັດຫຼັກຊັບຕາມປະເພດທຸລະກິດຫຼັກຊັບ ຕ້ອງມີທຶນຈົດທະບຽນ ດັ່ງນີ້:

1. ການເຄື່ອນໄຫວທຸລະກິດຫຼັກຊັບເຕັມຮູບແບບ ຕ້ອງມີທຶນຈົດທະບຽນໜຶ່ງຮ້ອຍຕື້ກີບ (100 ຕື້ກີບ);
2. ການເຄື່ອນໄຫວທຸລະກິດຫຼັກຊັບບາງປະເພດ ຕ້ອງມີທຶນຈົດທະບຽນດັ່ງນີ້:
   - ການຄ້າຫຼັກຊັບ ຕ້ອງມີທຶນຈົດທະບຽນແປດສິບຕື້ກີບ (80 ຕື້ກີບ);
   - ການເປັນນາຍໜ້າຊື້-ຂາຍຫຼັກຊັບ ຕ້ອງມີທຶນຈົດທະບຽນຫ້າສິບຕື້ກີບ (50 ຕື້ກີບ);
   - ການໃຫ້ຄຳປຶກສາທາງດ້ານການເງິນກ່ຽວກັບຫຼັກຊັບ ຕ້ອງມີທຶນຈົດທະບຽນສາມສິບຕື້ກີບ (30 ຕື້ກີບ).

### ມາດຕາ 5. ການຖອກທຶນຈົດທະບຽນ

ຜູ້ທີ່ໄດ້ຮັບອະນຸຍາດສ້າງຕັ້ງບໍລິສັດຫຼັກຊັບ ຕ້ອງຖອກທຶນຈົດທະບຽນໃຫ້ຄົບຖ້ວນ ຫຼື ຕ່ຳສຸດສາມສິບສ່ວນຮ້ອຍ (30%) ຂອງທຶນຈົດທະບຽນທັງໝົດ ເຂົ້າບັນຊີເງິນຝາກຂອງຕົນຢູ່ທະນາຄານແຫ່ງ ສປປ ລາວ ພາຍໃນກຳນົດສາມສິບວັນ (30 ວັນ) ນັບແຕ່ວັນທີ່ໄດ້ຮັບອະນຸຍາດສ້າງຕັ້ງເປັນຕົ້ນໄປ, ສ່ວນທຶນທີ່ຍັງເຫຼືອຕ້ອງຖອກໃຫ້ຄົບຖ້ວນພາຍໃນກຳນົດໜຶ່ງປີ (1 ປີ).

ຜູ້ທີ່ໄດ້ຮັບອະນຸຍາດສ້າງຕັ້ງບໍລິສັດຫຼັກຊັບ ທີ່ຕ້ອງການນຳໃຊ້ທຶນຈົດທະບຽນເພື່ອກະກຽມຄວາມພ້ອມໃນການເຄື່ອນໄຫວທຸລະກິດຫຼັກຊັບ ຫຼື ໃນເປົ້າໝາຍອື່ນ ຕ້ອງມີແຜນການນຳໃຊ້ທຶນຢ່າງລະອຽດ ແລະ ຕ້ອງໄດ້ຮັບອະນຸຍາດຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກ ຊັບ ແລະ ຕະຫຼາດຫຼັກຊັບ ທີ່ເອີ້ນຫຍໍ້ວ່າ: "ສຳນັກງານ ຄລຕ" ເສຍກ່ອນ.

**ມາດຕາ 6. ການຂຶ້ນທະບຽນວິສາຫະກິດ ແລະ ທະບຽນອາກອນ**

ຜູ້ທີ່ໄດ້ຮັບອະນຸຍາດສ້າງຕັ້ງບໍລິສັດຫຼັກຊັບ ຕ້ອງໄປແຈ້ງຂຶ້ນທະບຽນວິສາຫະກິດ ແລະ ທະບຽນອາກອນ ພາຍໃນກຳນົດສາມສິບວັນລັດຖະການ (30 ວັນ) ນັບແຕ່ວັນທີ່ໄດ້ຮັບອະນຸຍາດສ້າງຕັ້ງເປັນຕົ້ນໄປ.

**ມາດຕາ 7. ການອະນຸຍາດດຳເນີນທຸລະກິດ**

ສຳນັກງານ ຄລຕ ຈະອະນຸຍາດໃຫ້ດຳເນີນທຸລະກິດຫຼັກຊັບທັງໝົດ ຫຼື ບາງສ່ວນໄດ້ ກໍຕໍ່ເມື່ອບໍລິສັດຫຼັກຊັບປະຕິບັດຢ່າງຄົບຖ້ວນຕາມທີ່ໄດ້ກຳນົດໃນມາດຕາ 5 ແລະ 6 ຂອງລະບຽບສະບັບນີ້.

**ມາດຕາ 8. ຄ່າທຳນຽມ**

ບຸກຄົນ ແລະ ນິຕິບຸກຄົນທີ່ສະເໜີຂໍສ້າງຕັ້ງບໍລິສັດຫຼັກຊັບ ຕ້ອງເສຍຄ່າທຳນຽມໃຫ້ສຳນັກງານ ຄລຕ ຢ່າງຄົບຖ້ວນ.

ຄ່າທຳນຽມໃນການສະເໜີຂໍສ້າງຕັ້ງບໍລິສັດຫຼັກຊັບ ມີດັ່ງນີ້:

1. ຍື່ນສຳນວນຄຳຮ້ອງຂໍສ້າງຕັ້ງ ຈຳນວນສິບຫ້າລ້ານກີບ (15 ລ້ານກີບ) ແລະ ຕ້ອງຊຳລະເງິນໃນວັນທີ່ຍື່ນສຳນວນຄຳຮ້ອງ;
2. ໃບອະນຸຍາດສ້າງຕັ້ງບໍລິສັດຫຼັກຊັບ ຈຳນວນສູນຈຸດສູນໜຶ່ງສ່ວນຮ້ອຍ (0,01%) ຂອງທຶນຈົດທະບຽນ ແລະ ຕ້ອງຊຳລະເງິນໃນວັນທີ່ໄດ້ຮັບໃບອະນຸຍາດສ້າງຕັ້ງ.
3. ຄ່າຄຸ້ມຄອງປະຈຳປີ ຈຳນວນສູນຈຸດສູນຫ້າສ່ວນຮ້ອຍ (0,05%) ຂອງລາຍຮັບທັງໝົດປະຈຳປີ ຊຶ່ງຕ້ອງຊຳລະພາຍໃນໄຕມາດທີໜຶ່ງຂອງປີຖັດໄປ.

**ມາດຕາ 9. ການປ່ຽນແປງທີ່ຕ້ອງໄດ້ຮັບການອະນຸຍາດ**

ບໍລິສັດຫຼັກຊັບຕ້ອງໄດ້ຮັບອະນຸຍາດຈາກສຳນັກງານ ຄລຕ ເສຍກ່ອນ ຈຶ່ງສາມາດປ່ຽນແປງບັນຫາໃດໜຶ່ງໄດ້ ດັ່ງນີ້:

1. ການປ່ຽນແປງຊື່ ຫຼື ທີ່ຕັ້ງສຳນັກງານ;
2. ການໂຈະການເຄື່ອນໄຫວທຸລະກິດຊົ່ວຄາວ;
3. ການເພີ່ມ ຫຼື ຫຼຸດທຶນຈົດທະບຽນ;
4. ການເພີ່ມ ຫຼື ຖອນການດຳເນີນປະເພດທຸລະກິດຫຼັກຊັບໃດໜຶ່ງ ຕາມການກຳນົດໃນມາດຕາ 28 ຂອງລະບຽບສະບັບນີ້;
5. ການປ່ຽນແປງອັດຕາສ່ວນການຖືຮຸ້ນຂອງຜູ້ຖືຮຸ້ນໃດໜຶ່ງ ທີ່ມີສິດລົງຄະແນນສຽງນັບແຕ່ຫ້າສ່ວນຮ້ອຍ (5%) ຂຶ້ນໄປ;

6. ການປ່ຽນແປງສະມາຊິກສະພາບໍລິຫານ, ຄະນະອຳນວຍການ ແລະ ຄະນະກຳມະການກວດກາພາຍໃນ;
7. ການປ່ຽນແປງອື່ນໆ ທີ່ສົ່ງຜົນກະທົບຕໍ່ການເຄື່ອນໄຫວທຸລະກິດຫຼັກຊັບ.

ສຳນັກງານ ຄລຕ ຕ້ອງພິຈາລະນາກ່ຽວກັບການສະເໜີປ່ຽນແປງຂອງບໍລິສັດຫຼັກຊັບ ແລະ ແຈ້ງຕອບຢ່າງເປັນລາຍລັກອັກສອນພາຍໃນກຳນົດສາມສິບວັນ (30 ວັນ) ນັບແຕ່ວັນທີ່ໄດ້ຮັບການສະເໜີເປັນຕົ້ນໄປ.

### ມາດຕາ 10. ການສັ່ງໂຈະການເຄື່ອນໄຫວຊົ່ວຄາວ

ກໍລະນີບໍລິສັດຫຼັກຊັບ ຫາກດຳເນີນການໃດໜຶ່ງທີ່ໄດ້ກຳນົດໄວ້ໃນມາດຕາ 39 ຂອງດຳລັດວ່າດ້ວຍຫຼັກຊັບ ແລະ ຕະຫຼາດຫຼັກຊັບ, ສຳນັກງານ ຄລຕ ຈະແຈ້ງເຕືອນຢ່າງເປັນລາຍລັກອັກສອນ ແລະ ກຳນົດເວລາໃນການແກ້ໄຂບັນຫາດັ່ງກ່າວ. ຖ້າບໍລິສັດຫຼັກຊັບ ບໍ່ສາມາດແກ້ໄຂບັນຫາພາຍໃນກຳນົດເວລາທີ່ໄດ້ກຳນົດໄວ້ ສຳນັກງານ ຄລຕ ຈະສັ່ງໂຈະການເຄື່ອນໄຫວທຸລະກິດຫຼັກຊັບຊົ່ວຄາວ.

### ມາດຕາ 11. ການຍຸບເລີກດ້ວຍຄວາມສະໝັກໃຈ

ການຍຸບເລີກບໍລິສັດຫຼັກຊັບດ້ວຍຄວາມສະໝັກໃຈ ແມ່ນການຍຸບເລີກບົນພື້ນຖານການຕົກລົງຂອງກອງປະຊຸມຜູ້ຖືຮຸ້ນ ຊຶ່ງບໍລິສັດຫຼັກຊັບດັ່ງກ່າວ ຕ້ອງມີຖານະການເງິນພຽງພໍໃນການຊຳລະສະສາງ.

ບໍລິສັດຫຼັກຊັບທີ່ມີຈຸດປະສົງຍຸບເລີກການດຳເນີນທຸລະກິດຂອງຕົນ ຕ້ອງປະກອບສຳນວນຄຳຮ້ອງຍື່ນຕໍ່ສຳນັກງານ ຄລຕ ເພື່ອສະເໜີຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ທີ່ເອີ້ນຫຍໍ້ວ່າ: “ຄລຕ” ພິຈາລະນາ.

ສຳນວນຄຳຮ້ອງຂໍຍຸບເລີກ ປະກອບດ້ວຍເອກະສານຕົ້ນຕໍ ດັ່ງນີ້:

1. ຄຳຮ້ອງຂໍຍຸບເລີກ ເຊັນໂດຍຜູ້ອຳນວຍການ;
2. ມະຕິກອງປະຊຸມຜູ້ຖືຮຸ້ນ;
3. ກໍລະນີບໍລິສັດຫຼັກຊັບຄວບເຂົ້າກັນ ຊຶ່ງເຮັດໃຫ້ເສຍຖານະນິຕິບຸກຄົນ ຕ້ອງມີສຳເນົາສັນຍາການຄວບບໍລິສັດເຂົ້າກັນ;
4. ໃບຢັ້ງຢືນຖານະການເງິນທີ່ໄດ້ຮັບການກວດສອບຈາກພາຍນອກ;
5. ເອກະສານອື່ນໆ ຕາມການກຳນົດຂອງສຳນັກງານ ຄລຕ.

ຄລຕ ຕ້ອງພິຈາລະນາການຮ້ອງຂໍຍຸບເລີກພາຍໃນກໍານົດສາມສິບວັນລັດຖະການ (30 ວັນ) ນັບແຕ່ວັນທີ່ໄດ້ຮັບສໍານວນຄໍາຮ້ອງຄົບຖ້ວນ ແລະ ຖືກຕ້ອງເປັນຕົ້ນໄປ.

ບໍລິສັດຫຼັກຊັບຕ້ອງແຈ້ງໃຫ້ມວນຊົນຊາບ ໂດຍຜ່ານໜັງສືພິມລະດັບຊາດ, ໂທລະພາບ ແລະ ລະບົບສື່ສານທາງອີເລັກໂຕຣນິກເປັນເວລາສາມສິບວັນ (30 ວັນ) ຢ່າງຕໍ່ເນື່ອງ ນັບແຕ່ວັນທີ່ໄດ້ຮັບອະນຸຍາດຍຸບເລີກເປັນຕົ້ນໄປ.

**ມາດຕາ 12. ການຍຸບເລີກແບບບັງຄັບ**

ການຍຸບເລີກບໍລິສັດຫຼັກຊັບແບບບັງຄັບ ແມ່ນການຍຸບເລີກຕາມການຕົກລົງຂອງ ຄລຕ ໃນກໍລະນີດັ່ງນີ້:

1. ໄດ້ຮັບການອະນຸຍາດສ້າງຕັ້ງບົນພື້ນຖານການສະໜອງຂໍ້ມູນທີ່ບໍ່ຖືກຕ້ອງ ທີ່ສ້າງຜົນເສຍຫາຍຮ້າຍແຮງໃຫ້ແກ່ລະບົບຕະຫຼາດທຶນ ແລະ ຄວາມໝັ້ນຄົງຂອງບໍລິສັດຫຼັກຊັບ;
2. ລະເມີດລະບຽບການກ່ຽວກັບການຮັກສາຄວາມໝັ້ນຄົງ ຕາມການກໍານົດຂອງສໍານັກງານ ຄລຕ;
3. ຖືກສານຕັດສິນໃຫ້ລົ້ມລະລາຍ.

ບໍລິສັດຫຼັກຊັບຕ້ອງແຈ້ງໃຫ້ມວນຊົນຊາບ ໂດຍຜ່ານໜັງສືພິມລະດັບຊາດ, ໂທລະພາບ ແລະ ລະບົບສື່ສານທາງອີເລັກໂຕຣນິກເປັນເວລາສາມສິບວັນ (30 ວັນ) ຢ່າງຕໍ່ເນື່ອງ ນັບແຕ່ວັນທີ່ໄດ້ຮັບອະນຸຍາດຍຸບເລີກເປັນຕົ້ນໄປ.

**ມາດຕາ 13. ການຊໍາລະສະສາງ**

ບໍລິສັດຫຼັກຊັບທີ່ຖືກຍຸບເລີກຕາມມາດຕາ 11 ແລະ 12 ຂອງລະບຽບສະບັບນີ້ ຕ້ອງດໍາເນີນການຊໍາລະສະສາງຕາມທີ່ໄດ້ກໍານົດໃນມາດຕາ 41 ຂອງດໍາລັດວ່າດ້ວຍຫຼັກຊັບ ແລະ ຕະຫຼາດຫຼັກຊັບ. ຄ່າໃຊ້ຈ່າຍຕ່າງໆໃນການຊໍາລະສະສາງ ແມ່ນບໍລິສັດຫຼັກຊັບທີ່ຖືກຍຸບເລີກ ເປັນຜູ້ຮັບຜິດຊອບ.

## ໝວດທີ III
## ໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນ

**ມາດຕາ 14. ໂຄງປະກອບການຈັດຕັ້ງຂອງບໍລິສັດຫຼັກຊັບ**

ໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນຂອງບໍລິສັດຫຼັກຊັບ ມີດັ່ງນີ້:

- ກອງປະຊຸມຜູ້ຖືຮຸ້ນ;
- ສະພາບໍລິຫານ;
- ຄະນະກຳມະການກວດກາພາຍໃນ;
- ຜູ້ອ◌ຳນວຍການ;
- ຮອງຜູ້ອຳນວຍການ;
- ພະນັກງານວິຊາການຈຳນວນໜຶ່ງ.

## ມາດຕາ 15. ກອງປະຊຸມຜູ້ຖືຮຸ້ນ

ກອງປະຊຸມຜູ້ຖືຮຸ້ນ ແມ່ນການຈັດຕັ້ງສູງສຸດຂອງບໍລິສັດຫຼັກຊັບ. ກອງປະຊຸມຜູ້ຖືຮຸ້ນ ມີສອງປະເພດ (2 ປະເພດ) ຄື: ກອງປະຊຸມສາມັນ ແລະ ກອງປະຊຸມວິສາມັນ.

ການແຈ້ງກ່ຽວກັບກອງປະຊຸມ, ອົງປະຊຸມ, ວາລະກອງປະຊຸມ, ວິທີລົງມະຕິ, ມະຕິກອງປະຊຸມ, ການປ່ຽນແປງ ແລະ ການລົບລ້າງມະຕິກອງປະຊຸມ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍວິສາຫະກິດ. ກອງປະຊຸມສາມັນຂອງຜູ້ຖືຮຸ້ນ ຕ້ອງເປີດຂຶ້ນພາຍໃນກຳນົດສີ່ເດືອນ (4 ເດືອນ) ຫຼັງຈາກສິ້ນສຸດປີການບັນຊີ.

ກອງປະຊຸມວິສາມັນ ສາມາດເປີດຂຶ້ນໄດ້ທຸກເວລາ ຕາມຄວາມຈຳເປັນ ເພື່ອພິຈາລະນາບັນຫາຈຳເປັນ ແລະ ຮີບດ່ວນ.

## ມາດຕາ 16. ສິດ ແລະ ໜ້າທີ່ ຂອງກອງປະຊຸມຂອງຜູ້ຖືຮຸ້ນ

ກອງປະຊຸມສາມັນຂອງຜູ້ຖືຮຸ້ນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບຮອງເອົາການປ່ຽນແປງກົດລະບຽບຂອງບໍລິສັດຫຼັກຊັບ ຕາມການສະເໜີຂອງສະພາບໍລິຫານ;
2. ເລືອກຕັ້ງ ຫຼື ປົດຕຳແໜ່ງປະທານ, ຮອງປະທານ ແລະ ສະມາຊິກສະພາບໍລິຫານ;
3. ຕົກລົງເບັ້ຍປະຊຸມຂອງກອງປະຊຸມສະພາບໍລິຫານ, ເງິນເດືອນ, ເງິນບຳເນັດ ແລະ ນະໂຍບາຍຕ່າງໆ ສຳລັບຜູ້ບໍລິຫານ ແລະ ຄະນະອຳນວຍການ;
4. ຮັບຮອງເອົາບົດສະຫຼຸບ, ແຜນການດຳເນີນທຸລະກິດ ແລະ ບົດລາຍງານຜົນການກວດສອບປະຈຳປີ ຕາມການສະເໜີຂອງສະພາບໍລິຫານ;
5. ຮັບຮອງເອົາການຄວບທຸລະກິດ, ການຂາຍຊັບສົມບັດສ່ວນໃຫຍ່ ຫຼື ການຍຸບເລີກບໍລິສັດຫຼັກຊັບ ຕາມການສະເໜີຂອງສະພາບໍລິຫານ;
6. ຮັບຮອງເອົາການສະເໜີແບ່ງເງິນປັນຜົນ, ການສ້າງຄັງຕ່າງໆ ຕາມການສະເໜີຂອງສະພາບໍລິຫານ;
7. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

ກອງປະຊຸມວິສາມັນ ປະຕິບັດສິດ ແລະ ໜ້າທີ່ ທີ່ຈຳເປັນຊຶ່ງເກີດຂຶ້ນໃນລະຫວ່າງສອງກອງປະຊຸມສາມັນ ເປັນຕົ້ນການປັບປຸງແປງກົດລະບຽບ, ການເພີ່ມ ຫຼື ຫຼຸດທຶນຈົດທະບຽນ.

## ມາດຕາ 17. ສະພາບໍລິຫານ

ສະພາບໍລິຫານຂອງບໍລິສັດຫຼັກຊັບ ປະກອບດ້ວຍສະມາຊິກແຕ່ສາມຄົນ (3 ຄົນ) ຂຶ້ນໄປ, ໃນນັ້ນມີສະມາຊິກຈາກພາຍນອກຢ່າງໜ້ອຍໜຶ່ງຄົນ (1 ຄົນ).

ສະພາບໍລິຫານປະກອບດ້ວຍ ປະທານ, ຮອງປະທານ ແລະ ສະມາຊິກ ຊຶ່ງຖືກແຕ່ງຕັ້ງ ແລະ ປົດຕຳແໜ່ງໂດຍກອງປະຊຸມຜູ້ຖືຮຸ້ນ. ອາຍຸການຂອງສະມາຊິກສະພາບໍລິຫານ ແມ່ນບໍ່ເກີນສອງປີ (2 ປີ) ແລະ ສາມາດຖືກເລືອກຕັ້ງຄືນໃໝ່ໄດ້.

ສະພາບໍລິຫານ ຕ້ອງເປີດກອງປະຊຸມຢ່າງໜ້ອຍສອງຄັ້ງຕໍ່ປີ (2 ຄັ້ງ/ປີ).

## ມາດຕາ 18. ເງື່ອນໄຂຂອງສະມາຊິກສະພາບໍລິຫານ

ສະມາຊິກສະພາບໍລິຫານຂອງບໍລິສັດຫຼັກຊັບ ຕ້ອງມີເງື່ອນໄຂຕົ້ນຕໍ ດັ່ງນີ້:

1. ຄຸນວຸດທິການສຶກສາລະດັບປະລິນຍາຕີຂຶ້ນໄປ;
2. ປະສົບການທາງດ້ານການເງິນ-ການທະນາຄານ, ທຸລະກິດຫຼັກຊັບ ຫຼື ການບໍລິຫານທຸລະກິດສາມປີ (3 ປີ) ຂຶ້ນໄປ;
3. ບໍ່ເຄີຍຖືກປົດຕຳແໜ່ງຈາກການເປັນຜູ້ບໍລິຫານໃນນິຕິບຸກຄົນອື່ນ, ບໍ່ເຄີຍຖືກສານຕັດສິນໃຫ້ເປັນຜູ້ລົ້ມລະລາຍມາກ່ອນ ແລະ ບໍ່ເປັນຜູ້ບໍລິຫານໃນນິຕິບຸກຄົນ ທີ່ຖືກສານຕັດສິນໃຫ້ລົ້ມລະລາຍ;
4. ບໍ່ເຄີຍຖືກສານຕັດສິນລົງໂທດທາງອາຍາ ໃນສະຖານລັກຊັບ, ສໍ້ໂກງຊັບ, ຍັກຍອກຊັບ, ປອມແປງເອກະສານ, ຮັບ ຫຼື ໃຫ້ສິນບົນ, ສໍ້ລາດບັງຫຼວງ ຫຼື ຟອກເງິນ.

## ມາດຕາ 19. ສິດ ແລະ ໜ້າທີ່ ຂອງສະພາບໍລິຫານ

ສະພາບໍລິຫານ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດມະຕິກອງປະຊຸມຜູ້ຖືຮຸ້ນ;
2. ລາຍງານການເຄື່ອນໄຫວຂອງບໍລິສັດຫຼັກຊັບ ຕໍ່ກອງປະຊຸມຜູ້ຖືຮຸ້ນ;
3. ຊີ້ແຈງ, ຕອບຄຳຖາມ ແລະ ໃຫ້ລາຍລະອຽດກ່ຽວກັບການເຄື່ອນໄຫວຂອງບໍລິສັດຫຼັກຊັບ ຕໍ່ກອງປະຊຸມຜູ້ຖືຮຸ້ນ;

4. ຮັບຜິດຊອບຕໍ່ຜົນເສຍຫາຍຂອງບໍລິສັດຫຼັກຊັບ ຊຶ່ງເກີດຈາກຄວາມຜິດພາດຂອງຕົນ;
5. ສະເໜີແບ່ງປັນເງິນກຳໄລເຂົ້າຄັງຕ່າງໆ ແລະ ເງິນປັນຜົນຕໍ່ກອງປະຊຸມຜູ້ຖືຮຸ້ນ;
6. ສະເໜີແຜນດຳເນີນທຸລະກິດຕໍ່ກອງປະຊຸມຜູ້ຖືຮຸ້ນ ເພື່ອພິຈາລະນາຮັບຮອງ;
7. ແຕ່ງຕັ້ງຄະນະກຳມະການກວດກາພາຍໃນ;
8. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງຜູ້ອຳນວຍການ ແລະ ຮອງຜູ້ອຳນວຍການ;
9. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບຂອງບໍລິສັດຫຼັກຊັບ.

ສະມາຊິກສະພາບໍລິຫານ ບໍ່ສາມາດມອບໜ້າທີ່ຂອງຕົນໃຫ້ຜູ້ອື່ນປະຕິບັດແທນໄດ້.

**ມາດຕາ 20. ຄະນະກຳມະການກວດກາພາຍໃນ**

ຄະນະກຳມະການກວດກາພາຍໃນຂອງບໍລິສັດຫຼັກຊັບ ຕ້ອງມີສະມາຊິກຢ່າງໜ້ອຍສອງຄົນ (2 ຄົນ) ຂຶ້ນໄປ ຊຶ່ງຖືກແຕ່ງຕັ້ງ ຫຼື ປົດຕຳແໜ່ງໂດຍສະພາບໍລິຫານ.

**ມາດຕາ 21. ເງື່ອນໄຂຂອງຄະນະກຳມະການກວດກາພາຍໃນ**

ຄະນະກຳມະການກວດກາພາຍໃນຂອງບໍລິສັດຫຼັກຊັບ ຕ້ອງມີເງື່ອນໄຂຕົ້ນຕໍດັ່ງນີ້:

1. ຄຸນວຸດທິການສຶກສາລະດັບປະລິນຍາຕີຂຶ້ນໄປທາງດ້ານບັນຊີ, ກວດສອບ, ກົດໝາຍ, ການເງິນ-ການທະນາຄານ ຫຼື ບໍລິຫານທຸລະກິດ;
2. ປະສົບການທາງດ້ານບັນຊີ, ກວດສອບ, ການເງິນ-ການທະນາຄານ ຫຼື ທຸລະກິດຫຼັກຊັບ ສາມປີ (3 ປີ) ຂຶ້ນໄປ;
3. ບໍ່ເຄີຍຖືກສານຕັດສິນໃຫ້ເປັນຜູ້ລົ້ມລະລາຍມາກ່ອນ ແລະ ບໍ່ເປັນຜູ້ບໍລິຫານໃນນິຕິບຸກຄົນ ທີ່ຖືກສານຕັດສິນໃຫ້ລົ້ມລະລາຍ;
4. ບໍ່ເຄີຍຖືກສານຕັດສິນລົງໂທດທາງອາຍາ ໃນສະຖານລັກຊັບ, ສໍ້ໂກງຊັບ, ຍັກຍອກຊັບ, ປອມແປງເອກະສານ, ຮັບ ຫຼື ໃຫ້ສິນບົນ, ສໍ້ລາດບັງຫຼວງ ຫຼື ຟອກເງິນ.

**ມາດຕາ 22. ສິດ ແລະ ໜ້າທີ່ ຂອງຄະນະກຳມະການກວດກາພາຍໃນ**

ຄະນະກຳມະການກວດກາພາຍໃນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ສ້າງລະບົບການກວດກາພາຍໃນຂອງບໍລິສັດຫຼັກຊັບ;
2. ຕິດຕາມກວດກາການປະຕິບັດວຽກງານຂອງຜູ້ບໍລິຫານ;

3. ກວດກາ ແລະ ຕິດຕາມອັດຕາສ່ວນສະພາບຄ່ອງ ແລະ ອັດຕາສ່ວນຄວາມປອດໄພທາງການເງິນຂອງບໍລິສັດຫຼັກຊັບ ແລະ ລາຍງານໃຫ້ສະພາບໍລິຫານ;
4. ສັງລວມຂໍ້ມູນກ່ຽວກັບການຮ້ອງຟ້ອງຂອງລູກຄ້າ ເພື່ອສະເໜີຕໍ່ສະພາບໍລິຫານແກ້ໄຂ;
5. ຕີລາຄາຄຸນນະພາບຂອງບໍລິສັດກວດສອບພາຍນອກ, ຄວາມເປັນເອກະລາດ ແລະ ການພົວພັນຂອງຜູ້ກວດສອບພາຍນອກ ໂດຍເບິ່ງສາຍພົວພັນຮອບດ້ານລະຫວ່າງຜູ້ກວດສອບພາຍນອກກັບບໍລິສັດຫຼັກຊັບ;
6. ຕິດຕາມກວດກາຄວາມຄືບໜ້າຂອງຜູ້ບໍລິຫານ ກ່ຽວກັບການແກ້ໄຂຂໍ້ຄົງຄ້າງ ທີ່ກຳນົດໃນບົດລາຍງານການກວດສອບ;
7. ສະຫຼຸບລາຍງານຜົນການກວດກາກ່ຽວກັບການເຄື່ອນໄຫວຂອງບໍລິສັດຫຼັກຊັບ ໃຫ້ສະພາບໍລິຫານຊາບ ຢ່າງເປັນປົກກະຕິ;
8. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍຂອງສະພາບໍລິຫານ.

**ມາດຕາ 23. ຜູ້ອຳນວຍການ**

ຜູ້ອຳນວຍການ ແມ່ນຜູ້ບໍລິຫານຈັດການວຽກງານປະຈຳວັນຂອງບໍລິສັດຫຼັກຊັບໃນຂອບເຂດສິດ, ໜ້າທີ່, ແລະ ຄວາມຮັບຜິດຊອບຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບຂອງບໍລິສັດຫຼັກຊັບ.

ຜູ້ອຳນວຍການ ຖືກແຕ່ງຕັ້ງ ແລະ ປົດຕຳແໜ່ງໂດຍສະພາບໍລິຫານ, ມີອາຍຸການສອງປີ (2 ປີ) ແລະ ສາມາດຖືກແຕ່ງຕັ້ງຄືນໃໝ່ໄດ້.

ຜູ້ອຳນວຍການ ສາມາດເປັນສະມາຊິກສະພາບໍລິຫານໄດ້ ແຕ່ບໍ່ໃຫ້ດຳລົງຕຳແໜ່ງເປັນປະທານ ຫຼື ຮອງປະທານສະພາບໍລິຫານໃນເວລາດຽວກັນ.

**ມາດຕາ 24. ເງື່ອນໄຂຂອງຜູ້ອຳນວຍການ ແລະ ຮອງຜູ້ອຳນວຍການ**

ຜູ້ອຳນວຍການ ແລະ ຮອງຜູ້ອຳນວຍການຂອງບໍລິສັດຫຼັກຊັບ ຕ້ອງມີເງື່ອນໄຂຕາມທີ່ໄດ້ກຳນົດໄວ້ໃນມາດຕາ 18 ຂອງລະບຽບສະບັບນີ້. ນອກຈາກນັ້ນ, ຕ້ອງມີໃບຢັ້ງຢືນທາງດ້ານວິຊາຊີບທຸລະກິດຫຼັກຊັບ ທີ່ອອກໂດຍສຳນັກງານ ຄລຕ.

**ມາດຕາ 25. ສິດ ແລະ ໜ້າທີ່ ຂອງຜູ້ອຳນວຍການ**

ຜູ້ອຳນວຍການ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເປັນຕົວແທນໃນການລົງລາຍເຊັນໃນສັນຍາ ແລະ ເອກະສານທາງການຂອງບໍລິສັດຫຼັກຊັບ;

2. ບໍລິຫານວຽກງານປະຈຳວັນຂອງບໍລິສັດຫຼັກຊັບໃນຂອບເຂດສິດ ແລະ ໜ້າທີ່ຂອງຕົນຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບ ຫຼື ຕາມການມອບໝາຍຂອງສະພາບໍລິຫານ;
3. ສ້າງ, ສະເໜີ ຫຼື ດັດແກ້ແຜນທຸລະກິດປະຈຳປີ ເພື່ອສະເໜີສະພາບໍລິຫານ ພິຈາລະນາຮັບຮອງເອົາ;
4. ສະເໜີແຕ່ງຕັ້ງ ຫຼື ປົດຕຳແໜ່ງຮອງຜູ້ອຳນວຍການ ຕໍ່ສະພາບໍລິຫານພິຈາລະນາຮັບຮອງເອົາ;
5. ແຕ່ງຕັ້ງ ຫຼື ປົດຕຳແໜ່ງຫົວໜ້າພະແນກ ແລະ ບັນຈຸສັບຊ້ອນພະນັກງານຂອງບໍລິສັດຫຼັກຊັບ;
6. ສະໜອງຂໍ້ມູນ ແລະ ໃຫ້ຄຳຊີ້ແຈງກ່ຽວກັບບັນຫາ ທີ່ສະພາບໍລິຫານມີຄວາມສົນໃຈ;
7. ສ້າງ ຫຼື ປັບປຸງກົດລະບຽບການຄຸ້ມຄອງ ເພື່ອສະເໜີຕໍ່ສະພາບໍລິຫານພິຈາລະນາຮັບຮອງເອົາ;
8. ຮັບຜິດຊອບທຸກການເຄື່ອນໄຫວຂອງບໍລິສັດຫຼັກຊັບ ຕໍ່ສະພາບໍລິຫານ ແລະ ຕໍ່ຜົນເສັຍຫາຍຂອງບໍລິສັດຫຼັກຊັບ ແລະ ຂອງລູກຄ້າທີ່ເກີດຈາກຄວາມຜິດພາດຂອງຕົນ;
9. ສະເໜີການສ້າງຕັ້ງບໍລິສັດໃນກຸ່ມ ຫຼື ລົງທຶນໃນທຸລະກິດອື່ນ ຕໍ່ສະພາບໍລິຫານພິຈາລະນາຮັບຮອງເອົາ;
10. ຕົກລົງກ່ຽວກັບເງິນເດືອນຂອງພະນັກງານ, ປະຕິບັດນະໂຍບາຍຍ້ອງຍໍ ຫຼື ປະຕິບັດວິໄນຕໍ່ພະນັກງານ ຕາມກົດລະບຽບຂອງບໍລິສັດຫຼັກຊັບ;
11. ໃຫ້ການຮ່ວມມື, ສະໜອງຂໍ້ມູນ ແລະ ຊີ້ແຈງບັນຫາ ຕໍ່ຄະນະກຳມະການກວດກາພາຍໃນ ແລະ ຜູ້ກວດສອບພາຍນອກ;
12. ລາຍງານການເຄື່ອນໄຫວຂອງບໍລິສັດຫຼັກຊັບຕໍ່ສະພາບໍລິຫານ, ຄະນະກຳມະການກວດກາພາຍໃນ ແລະ ຄະນະກຳມະການອື່ນ (ຖ້າມີ);
13. ໃຫ້ຄຳຊີ້ແຈງ ແລະ ສະໜອງເອກະສານທີ່ຈຳເປັນ ຕາມການຮ້ອງຂໍຂອງພາກສ່ວນກ່ຽວຂ້ອງ;
14. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໃນກົດລະບຽບຂອງບໍລິສັດຫຼັກຊັບ.

**ມາດຕາ 26. ເງື່ອນໄຂຂອງພະນັກງານວິຊາການດ້ານຫຼັກຊັບ**

ພະນັກງານວິຊາການດ້ານຫຼັກຊັບ ໝາຍເຖິງພະນັກງານທີ່ປະຕິບັດໜ້າທີ່ເປັນນັກຄ້າຫຼັກຊັບ, ນາຍໜ້າຊື້-ຂາຍຫຼັກຊັບ ແລະ ວິເຄາະດ້ານການເງິນຂອງບໍລິສັດຫຼັກຊັບ.

ພະນັກງານວິຊາການດ້ານຫຼັກຊັບ ຕ້ອງມີເງື່ອນໄຂຕົ້ນຕໍ ດັ່ງນີ້:

1. ຄຸນວຸດທິການສຶກສາລະດັບປະລິນຍາຕີຂຶ້ນໄປ ຫຼື ປະສົບການທາງດ້ານການເງິນ-ການທະນາຄານ ແລະ ທຸລະກິດຫຼັກຊັບຢ່າງໜ້ອຍສາມປີ (3 ປີ);

2. ໃບຢັ້ງຢືນທາງດ້ານວິຊາຊີບທຸລະກິດຫຼັກຊັບ ທີ່ອອກໃຫ້ໂດຍສໍານັກງານ ຄລຕ;
3. ບໍ່ເຄີຍຖືກສານຕັດສິນລົງໂທດທາງອາຍາ ໃນສະຖານລັກຊັບ, ສໍ້ໂກງຊັບ, ຍັກຍອກຊັບ, ປອມແປງເອກະສານ, ຮັບ ຫຼື ໃຫ້ສິນບົນ, ສໍ້ລາດບັງຫຼວງ ຫຼື ຟອກເງິນ;
4. ເງື່ອນໄຂອື່ນໆ ຕາມການກໍານົດຂອງສໍານັກງານ ຄລຕ.

## ໝວດທີ IV
## ການເຄື່ອນໄຫວທຸລະກິດຫຼັກຊັບ

### ມາດຕາ 27. ຫຼັກການໃນການເຄື່ອນໄຫວທຸລະກິດຫຼັກຊັບ

ບໍລິສັດຫຼັກຊັບ ຕ້ອງເຄື່ອນໄຫວທຸລະກິດຫຼັກຊັບຕາມຫຼັກການ ດັ່ງນີ້:

1. ເຄື່ອນໄຫວຕາມປະເພດທຸລະກິດຫຼັກຊັບ ທີ່ໄດ້ຮັບອະນຸຍາດ;
2. ຕອບສະໜອງຂໍ້ມູນໃຫ້ແກ່ລູກຄ້າຢ່າງຖືກຕ້ອງ ແລະ ທັນກັບເວລາ;
3. ໃຫ້ບູລິມະສິດແກ່ລູກຄ້າໃນການດໍາເນີນທຸລະກໍາການຊື້-ຂາຍຫຼັກຊັບ ກ່ອນຕົນເອງ;
4. ຕ້ອງເກັບຮັກສາຂໍ້ມູນທີ່ເປັນຄວາມລັບຂອງລູກຄ້າ, ຍົກເວັ້ນກໍລະນີ ອົງການທີ່ມີສິດອໍານາດຕາມລະບຽບກົດໝາຍ ຮຽກຮ້ອງໃຫ້ ສະໜອງຂໍ້ມູນດັ່ງກ່າວ;
5. ພັດທະນາລະບົບເຕັກໂນໂລຊີທີ່ທັນສະໄໝ ເພື່ອຮັບປະກັນການບໍລິການລູກຄ້າ ແລະ ການສະໜອງຂໍ້ມູນຂ່າວສານຕໍ່ມວນຊົນ ໂດຍສອດຄ່ອງກັບລະບຽບກ່ຽວຂ້ອງທີ່ສໍານັກງານ ຄລຕ ກໍານົດ;
6. ຮັບປະກັນຄວາມໝັ້ນຄົງໃນການເຄື່ອນໄຫວທຸລະກິດຫຼັກຊັບ;
7. ເກັບຮັກສາຂໍ້ມູນ ແລະ ເອກະສານກ່ຽວກັບການເຄື່ອນໄຫວທຸລະກິດຫຼັກຊັບ ຢ່າງຕໍ່າຫ້າປີ (5 ປີ) ຂຶ້ນໄປ ເຊັ່ນ: ກົດລະບຽບຂອງບໍລິສັດຫຼັກຊັບ, ລະບຽບກ່ຽວກັບການເຄື່ອນໄຫວທຸລະກິດຫຼັກຊັບ, ບົດບັນທຶກ ແລະ ມະຕິຕົກລົງຕ່າງໆ, ບົດບັນທຶກການບັນຊີ, ບົດບັນທຶກກ່ຽວກັບການດໍາເນີນທຸລະກິດຫຼັກຊັບ;
8. ປະຕິບັດພັນທະທັງໝົດທີ່ກ່ຽວຂ້ອງກັບລູກຄ້າໃຫ້ສອດຄ່ອງກັບເງື່ອນໄຂ ທີ່ໄດ້ກໍານົດໃນສັນຍາ ແລະ ລະບຽບກົດໝາຍ;
9. ຈັດຕັ້ງປະຕິບັດການຮັບ-ຝາກ, ການຊໍາລະສະສາງ ແລະ ສົ່ງ-ມອບຫຼັກຊັບຕາມລະບຽບການ ແລະ ບົດແນະນໍາທີ່ສໍານັກງານ ຄລຕ ກໍານົດ;
10. ປະຕິບັດຫຼັກການອື່ນໆ ຕາມການກໍານົດຂອງສໍານັກງານ ຄລຕ.

**ມາດຕາ 28. ປະເພດທຸລະກິດຫຼັກຊັບ**

ສໍານັກງານ ຄລຕ ອະນຸຍາດໃຫ້ດໍາເນີນປະເພດທຸລະກິດຫຼັກຊັບ ດັ່ງນີ້:

1. ການໃຫ້ການຄໍ້າປະກັນການຂາຍຫຼັກຊັບ;
2. ການຄ້າຫຼັກຊັບ;
3. ການເປັນນາຍໜ້າຊື້-ຂາຍຫຼັກຊັບ;
4. ການໃຫ້ຄໍາປຶກສາທາງດ້ານການເງິນກ່ຽວກັບຫຼັກຊັບ.

**ມາດຕາ 29. ການໃຫ້ການຄໍ້າປະກັນການຂາຍຫຼັກຊັບ**

ບໍລິສັດຫຼັກຊັບທີ່ໄດ້ຮັບອະນຸຍາດເຄື່ອນໄຫວທຸລະກິດຫຼັກຊັບ ປະເພດການໃຫ້ການຄໍ້າ ການປະກັນການຂາຍຫຼັກຊັບ ສາມາດເຄື່ອນໄຫວ ດັ່ງນີ້:

1. ກະກຽມຄວາມພ້ອມເພື່ອສະເໜີຂາຍຫຼັກຊັບ ໃນນາມບໍລິສັດອອກຫຼັກຊັບ;
2. ຮັບຊື້ຫຼັກຊັບທັງໝົດ ຫຼື ບາງສ່ວນຈາກບໍລິສັດອອກຫຼັກຊັບ ເພື່ອນໍາໄປແບ່ງປັນ ຫຼື ຂາຍຕໍ່;
3. ຊື້ຫຼັກຊັບສ່ວນທີ່ຂາຍບໍ່ໝົດ ເພື່ອຮັບປະກັນຄວາມສໍາເລັດຂອງການອອກຫຼັກຊັບ;
4. ດໍາເນີນປະເພດທຸລະກິດຫຼັກຊັບ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 30, 31 ແລະ 32 ຂອງລະບຽບສະບັບນີ້.

**ມາດຕາ 30. ການຄ້າຫຼັກຊັບ**

ບໍລິສັດຫຼັກຊັບທີ່ໄດ້ຮັບອະນຸຍາດເຄື່ອນໄຫວທຸລະກິດຫຼັກຊັບ ປະເພດການຄ້າຫຼັກຊັບ ສາມາດເຄື່ອນໄຫວ ດັ່ງນີ້:

1. ຊື້-ຂາຍຫຼັກຊັບໂດຍນໍາໃຊ້ເງິນ ແລະ ຫຼັກຊັບທີ່ຕົນຖືຄອງ ເຂົ້າໃນການຊື້-ຂາຍ ພ້ອມທັງຮັບຜິດຊອບຄວາມສ່ຽງດ້ວຍຕົນເອງ;
2. ດໍາເນີນປະເພດທຸລະກິດຫຼັກຊັບ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 31 ແລະ 32 ຂອງລະບຽບສະບັບນີ້.

**ມາດຕາ 31. ການເປັນນາຍໜ້າຊື້-ຂາຍຫຼັກຊັບ**

ບໍລິສັດຫຼັກຊັບທີ່ໄດ້ຮັບອະນຸຍາດເຄື່ອນໄຫວທຸລະກິດຫຼັກຊັບ ປະເພດການເປັນນາຍໜ້າຊື້-ຂາຍຫຼັກຊັບ ສາມາດຊື້ ຫຼື ຂາຍຫຼັກຊັບໃນນາມລູກຄ້າ ຕາມການສັ່ງຊື້ ຫຼື ຂາຍຂອງລູກຄ້າຕົນ ໂດຍໄດ້ຮັບຄ່າບໍລິການເປັນສິ່ງຕອບແທນ. ນອກຈາກນັ້ນ, ຍັງສາ

ມາດດຳເນີນປະເພດທຸລະກິດຫຼັກຊັບຕາມທີ່ໄດ້ກຳນົດໄວ້ໃນມາດຕາ 32 ຂໍ້ 2 ຂອງລະບຽບສະບັບນີ້.

### ມາດຕາ 32. ການເປັນທີ່ປຶກສາທາງດ້ານການເງິນ

ບໍລິສັດຫຼັກຊັບທີ່ໄດ້ຮັບອະນຸຍາດເຄື່ອນໄຫວທຸລະກິດຫຼັກຊັບ ປະເພດການເປັນທີ່ປຶກສາທາງດ້ານການເງິນ ສາມາດເຄື່ອນໄຫວ ດັ່ງນີ້:

1. ໃຫ້ຄຳປຶກສາເພື່ອກະກຽມຄວາມພ້ອມໃນການອອກ, ສະເໜີຂາຍຫຼັກຊັບຕໍ່ມວນຊົນ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບ ເຊັ່ນ: ການປັບປຸງຮູບແບບວິສາຫະກິດ, ການຄຸ້ມຄອງບໍລິຫານ, ໂຄງສ້າງທາງການເງິນຂອງທຸລະກິດ, ການຕີມູນຄ່າວິສາຫະກິດ, ການກຳນົດລາຄາ, ແລະ ການກຳນົດຈຳນວນຫຼັກຊັບທີ່ຈະອອກ ແລະ ສະເໜີຂາຍຕໍ່ມວນຊົນ ແລະ ອື່ນໆ;
2. ໃຫ້ຄຳປຶກສາໂດຍກົງແກ່ນັກລົງທຶນກ່ຽວກັບການລົງທຶນໃສ່ຫຼັກຊັບ ຫຼື ກຸ່ມຫຼັກຊັບ ເຊັ່ນ: ການສ້າງຍຸດທະສາດການລົງທຶນໃສ່ຫຼັກຊັບ, ສະໜອງຂໍ້ມູນກ່ຽວກັບການວິເຄາະຫຼັກຊັບ ແລະ ທຸລະກິດຫຼັກຊັບ ໂດຍໄດ້ຮັບຄ່າບໍລິການເປັນສິ່ງຕອບແທນ.

### ມາດຕາ 33. ຂໍ້ຫ້າມໃນການດຳເນີນທຸລະກິດຫຼັກຊັບ

ຫ້າມບໍລິສັດຫຼັກຊັບ ເຄື່ອນໄຫວຕາມທີ່ກຳນົດໃນມາດຕາ 58 ຂອງດຳລັດວ່າດ້ວຍຫຼັກຊັບ ແລະ ຕະຫຼາດຫຼັກຊັບ.

ນອກຈາກນັ້ນ ຫ້າມບໍລິສັດຫຼັກຊັບ ເຄື່ອນໄຫວ ດັ່ງນີ້:

1. ເຄື່ອນໄຫວທຸລະກິດຫຼັກຊັບ ທີ່ບໍ່ໄດ້ຮັບອະນຸຍາດຈາກສຳນັກງານ ຄລຕ;
2. ລົງທຶນໃນບໍລິສັດອອກຫຼັກຊັບ ທີ່ບໍ່ໄດ້ຈົດທະບຽນໃນຕະຫຼາດຫຼັກຊັບ ແລະ ບໍລິສັດຈຳກັດອື່ນ;
3. ແຈ້ງ ຫຼື ເຜີຍແຜ່ຂໍ້ມູນທີ່ບໍ່ຖືກຕ້ອງ ຊຶ່ງສົ່ງຜົນກະທົບຕໍ່ຫຼັກຊັບ, ຕະຫຼາດຫຼັກຊັບ ແລະ ນັກລົງທຶນ;
4. ເປີດເຜີຍ ຫຼື ນຳໃຊ້ຂໍ້ມູນຂອງລູກຄ້າ ເພື່ອຜົນປະໂຫຍດຂອງຕົນ ຫຼື ຜູ້ອື່ນ;
5. ໃຫ້ ຫຼື ຮັບສິ່ງຕອບແທນໃດໆ ທີ່ມີຜົນຕໍ່ການເຄື່ອນໄຫວທຸລະກິດຫຼັກຊັບ ແລະ ການລົງທຶນໃນທຸລະກິດຫຼັກຊັບ;
6. ນຳໃຊ້ບັນຊີເງິນ ແລະ ບັນຊີຫຼັກຊັບຂອງລູກຄ້າ ໂດຍບໍ່ໄດ້ຮັບອະນຸຍາດຈາກລູກຄ້າ;
7. ບໍລິການລູກຄ້າປະເພດນິຕິບຸກຄົນ ດ້ວຍການເປີດບັນຊີໃນນາມບຸກຄົນເພື່ອຊື້-ຂາຍຫຼັກຊັບ;

8. ໃຫ້ຄຳຄິດເຫັນ ຫຼື ໃຫ້ການຮັບປະກັນແກ່ລູກຄ້າກ່ຽວກັບຜົນຕອບແທນ ຫຼື ກຳໄລທີ່ຈະໄດ້ຮັບຈາກການລົງທຶນ ຫຼື ໃຫ້ການຮັບປະກັນແກ່ລູກຄ້າວ່າການລົງທຶນຂອງເຂົາເຈົ້ານັ້ນ ຈະບໍ່ຂາດທຶນ, ຍົກເວັ້ນການລົງທຶນໃນຫຼັກຊັບທີ່ໃຫ້ຜົນຕອບແທນແບບຄົງທີ່ ຫຼື ບໍ່ເໜັງຕີງ;
9. ສະໜອງສິນເຊື່ອດ້ວຍຮູບການໃດໜຶ່ງໃຫ້ແກ່ລູກຄ້າ ເພື່ອຊື້ຫຼັກຊັບ;
10. ດຳເນີນການຂາຍຫຼັກຊັບທີ່ຕົນບໍ່ມີ ຫຼື ອະນຸຍາດໃຫ້ລູກຄ້າຂອງຕົນດຳເນີນການຂາຍຫຼັກຊັບທີ່ເຂົາເຈົ້າບໍ່ມີໃນເວລາເຮັດທຸລະກຳຊື້-ຂາຍຫຼັກ ຫຼື ເອົາຫຼັກຊັບໃຫ້ລູກຄ້າຂອງຕົນຢືມ ເພື່ອຂາຍ;
11. ຮັບຄຳສັ່ງຊື້-ຂາຍຫຼັກຊັບຈາກລູກຄ້າ ຢູ່ນອກສະຖານທີ່ຊື້-ຂາຍທີ່ໄດ້ກຳນົດໄວ້;
12. ຂໍ້ຫ້າມອື່ນໆ ຕາມການກຳນົດຂອງສຳນັກງານ ຄລຕ.

## ໝວດທີ V
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 34. ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ ແລະ ນິຕິບຸກຄົນ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດລະບຽບການສະບັບນີ້ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ ໃນຂົງເຂດວຽກງານຫຼັກຊັບ ແລະ ຕະຫຼາດຫຼັກຊັບ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນໆ ຕາມລະບຽບການທີ່ກ່ຽວຂ້ອງ.

### ມາດຕາ 35. ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ ແລະ ນິຕິບຸກຄົນ ທີ່ລະເມີດລະບຽບການສະບັບນີ້ ແລະ ລະບຽບການທີ່ກ່ຽວຂ້ອງ ຈະຖືກປະຕິບັດມາດຕະການ ດັ່ງນີ້:

1. ກໍລະນີທີ່ລະເມີດເປັນຄັ້ງທຳອິດ ແລະ ມີລັກສະນະເບົາບາງ ຈະຖືກກ່າວເຕືອນເປັນລາຍລັກອັກສອນ ຈາກສຳນັກງານ ຄລຕ;
2. ພາຍຫຼັງຖືກກ່າວເຕືອນແລ້ວ ແຕ່ຍັງສືບຕໍ່ລະເມີດ ຫຼື ລະເມີດຄັ້ງທຳອິດ ແຕ່ມີລັກສະນະຮ້າຍແຮງ, ສົ່ງຜົນກະທົບຕໍ່ລະບົບຕະຫຼາດທຶນ, ຜູ້ລະເມີດຈະຖືກປັບໃໝ, ໂຈະ ຫຼື ປົດຕຳແໜ່ງຜູ້ບໍລິຫານ, ໂຈະການເຄື່ອນໄຫວທຸລະກິດຫຼັກຊັບປະເພດໃດໜຶ່ງ ຫຼື ທັງໝົດ, ຖອນໃບອະນຸຍາດສ້າງຕັ້ງບໍລິສັດຫຼັກຊັບ ຕາມລະບຽບກ່ຽວຂ້ອງຂອງສຳນັກງານ ຄລຕ;

3. ຖ້າວ່າການລະເມີດດັ່ງກ່າວເປັນການກະທຳຜິດກົດໝາຍ ຜູ້ລະເມີດຈະຖືກດຳເນີນຄະດີຕາມກົດໝາຍ ຕາມກໍລະນີເບົາ ຫຼື ໜັກ.

## ໝວດທີ VI
## ຂໍ້ກຳນົດສຸດທ້າຍ

**ມາດຕາ 36. ການຈັດຕັ້ງປະຕິບັດ**

ສຳນັກງານ ຄລຕ ແລະ ພາກສ່ວນອື່ນໆ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ.

**ມາດຕາ 37. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ປະທານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ**

**ສົມສະຫວາດ ເລັ່ງສະຫວັດ**

**ສາລະບານ**

ໝວດທີ I .......... 1
ບົດບັນຍັດທົ່ວໄປ .......... 1
ມາດຕາ 1. ຈຸດປະສົງ .......... 1
ມາດຕາ 2. ຂອບເຂດການນຳໃຊ້ .......... 1
ໝວດທີ II .......... 2
ການສ້າງຕັ້ງບໍລິສັດຫຼັກຊັບ .......... 2
ມາດຕາ 3. ການຂໍສ້າງຕັ້ງບໍລິສັດຫຼັກຊັບ .......... 2
ມາດຕາ 4. ທຶນຈົດທະບຽນ .......... 2
ມາດຕາ 5. ການຖອກທຶນຈົດທະບຽນ .......... 2
ມາດຕາ 6. ການຂຶ້ນທະບຽນວິສາຫະກິດ ແລະ ທະບຽນອາກອນ .......... 3
ມາດຕາ 7. ການອະນຸຍາດດຳເນີນທຸລະກິດ .......... 3
ມາດຕາ 8. ຄ່າທຳນຽມ .......... 3
ມາດຕາ 9. ການປ່ຽນແປງທີ່ຕ້ອງໄດ້ຮັບການອະນຸຍາດ .......... 3
ມາດຕາ 10. ການສັ່ງໂຈະການເຄື່ອນໄຫວຊົ່ວຄາວ .......... 4
ມາດຕາ 11. ການຍຸບເລີກດ້ວຍຄວາມສະໝັກໃຈ .......... 4
ມາດຕາ 12. ການຍຸບເລີກແບບບັງຄັບ .......... 5
ມາດຕາ 13. ການຊຳລະສະສາງ .......... 5
ໝວດທີ III .......... 5
ໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນ .......... 5

ມາດຕາ 14. ໂຄງປະກອບການຈັດຕັ້ງຂອງບໍລິສັດຫຼັກຊັບ ........................................ 5
ມາດຕາ 15. ກອງປະຊຸມຜູ້ຖືຮຸ້ນ ........................................ 6
ມາດຕາ 16. ສິດ ແລະ ໜ້າທີ່ ຂອງກອງປະຊຸມຂອງຜູ້ຖືຮຸ້ນ ........................................ 6
ມາດຕາ 17. ສະພາບໍລິຫານ ........................................ 7
ມາດຕາ 18. ເງື່ອນໄຂຂອງສະມາຊິກສະພາບໍລິຫານ ........................................ 7
ມາດຕາ 19. ສິດ ແລະ ໜ້າທີ່ ຂອງສະພາບໍລິຫານ ........................................ 7
ມາດຕາ 20. ຄະນະກຳມະການກວດກາພາຍໃນ ........................................ 8
ມາດຕາ 21. ເງື່ອນໄຂຂອງຄະນະກຳມະການກວດກາພາຍໃນ ........................................ 8
ມາດຕາ 22. ສິດ ແລະ ໜ້າທີ່ ຂອງຄະນະກຳມະການກວດກາພາຍໃນ ........................................ 8
ມາດຕາ 23. ຜູ້ອຳນວຍການ ........................................ 9
ມາດຕາ 24. ເງື່ອນໄຂຂອງຜູ້ອຳນວຍການ ແລະ ຮອງຜູ້ອຳນວຍການ ........................................ 9
ມາດຕາ 25. ສິດ ແລະ ໜ້າທີ່ ຂອງຜູ້ອຳນວຍການ ........................................ 9
ມາດຕາ 26. ເງື່ອນໄຂຂອງພະນັກງານວິຊາການດ້ານຫຼັກຊັບ ........................................ 10
ໝວດທີ IV ........................................ 11
ການເຄື່ອນໄຫວທຸລະກິດຫຼັກຊັບ ........................................ 11
ມາດຕາ 27. ຫຼັກການໃນການເຄື່ອນໄຫວທຸລະກິດຫຼັກຊັບ ........................................ 11
ມາດຕາ 28. ປະເພດທຸລະກິດຫຼັກຊັບ ........................................ 12
ມາດຕາ 29. ການໃຫ້ການຄ້ຳປະກັນການຂາຍຫຼັກຊັບ ........................................ 12
ມາດຕາ 30. ການຄ້າຫຼັກຊັບ ........................................ 12
ມາດຕາ 31. ການເປັນນາຍໜ້າຊື້-ຂາຍຫຼັກຊັບ ........................................ 12
ມາດຕາ 32. ການເປັນທີ່ປຶກສາທາງດ້ານການເງິນ ........................................ 13

ມາດຕາ 33. ຂໍ້ຫ້າມໃນການດຳເນີນທຸລະກິດຫຼັກຊັບ ................................................ 13

ໝວດທີ V ................................................................................................ 14

ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ ................................................ 14

ມາດຕາ 34. ນະໂຍບາຍຕໍ່ຜູ້ມີຜົນງານ ................................................................ 14

ມາດຕາ 35. ມາດຕະການຕໍ່ຜູ້ລະເມີດ ................................................................ 14

ໝວດທີ VI ................................................................................................ 15

ຂໍ້ກຳນົດສຸດທ້າຍ ........................................................................................ 15

ມາດຕາ 36. ການຈັດຕັ້ງປະຕິບັດ ...................................................................... 15

ມາດຕາ 37. ຜົນສັກສິດ ................................................................................ 15